# ຕົວຢ່າງການໃຊ້ປະຕິທິນມະຫາສັກຣາດ

ສະບາຍດີ ທ່ານ ຮູ້ແລ້ວເຖົ້າເຂົ້າໃຈແລ້ວຕາຍ
ສະບາຍດີ ທ່ານທີ່ນັບຖືແລະຮັກແພງທັງຫລາຍ

ການຊອກຫາຕຳຣາ ແລະ ທິສດີຕ່າງໆສຳເຣັດຮູບຂຶ້ນມາໄດ້ກໍເປັນເພາະຍ້ອນຄຳຖາມນີ້ເອງ ສະນັ້ນ ຄົນທີ່ບໍ່ຄ່ອຍຕັ້ງຄຳຖາມມັກຈະຂາດຄວາມສລາດແລະຕົກໂງ່ໃຫ້ຄົນອື່ນຢູ່ເລື້ອຍ ແຕ່ບໍ່ໄດ້ຫມາຍຄວາມວ່າ ຜູ້ກ່ຽວເປັນຄົນໂງ່ມາແຕ່ກຳເນີດ ໃຜໆກໍອາດຈະຕົກຢູ່ໃນກໍຣະນີນີ້ມາກ່ອນແລ້ວ ຈຶ່ງສາມາດເຂົ້າໃຈໄດ້ດີ ດ້ວຍເຫດນີ້ ການຕັ້ງຄຳຖາມເພື່ອການຮູ້ແລະເພື່ອເຮັດໃຫ້ຜູ້ອື່ນຮູ້ດ້ວຍ ຈະເປັນການດີສເມີໄປໃນຊີວິດປະຈຳວັນຂອງເຮົາ ອີກປະການນຶ່ງ ຖ້າເຮົາສາມາດຕັ້ງຄຳຖາມໄດ້ດີ ຄື ຄຳຖາມທີ່ເປັນປໂຍດ ຫລື ຄຳຖາມທີ່ສົມເຫດສົມຜົນ ມັນຈະອຳນວຍຄວາມສະດວກໃຫ້ແກ່ການຄົ້ນພົບຄຳຕອບອັນດີເດັ່ນໄດ້ໄວ

ຄຳຖາມຂອງທ່ານ ຮູ້ແລ້ວເຖົ້າເຂົ້າໃຈແລ້ວຕາຍ ເປັນຄຳຖາມທີ່ດີ ຂ້າພະເຈົ້າກໍນັ່ງລໍຄອຍຖ້າມັນຢູ່ເຫມືອນກັນ ສະນັ້ນ ເພື່ອຫລີກລ້ຽງຂີ້ຝອຍ ຂ້າພະເຈົ້າ ຂໍເສີມການອະທິບາຍ ເພື່ອໃຫ້ຄວາມເຂົ້າໃຈຂອງເຮົາ ຊັດແຈ້ງຂຶ້ນຕື່ມ ດັ່ງນີ້ ຄື

- ເຮົາບໍ່ຮູ້ດ້ວຍຄວາມແນ່ນອນວ່າ ຄັ້ງກາລປະຖົມນັ້ນ ເພິ່ນເຄີຍໄດ້ກຳນົດປະຕິທິນມະຫາສັກຣາດໃສ່ກັບປີຈັນທະຄະຕິມາກ່ອນການກຳນົດໃສ່ກັບປີຈັນໂທສຸຣິຍະຄະຕິນີ້ຫລືບໍ່ ເພາະວ່າ ການກຳນົດກັນໃນປັດຈຸບັນນີ້ເປັນການກ່າຍເອົາແບບຈັນໂທສຸຣິຍະຄະຕິ ຈັນທະຄະຕິ ຫມາຍເຖິງການກຳນົດທີ່ອີງເອົາຕາມການຫມູນວຽນຂອງເດືອນ ຫລື ຂອງພຣະຈັນຢ່າງດຽວ ໂດຍບໍ່ມີຫຍັງກ່ຽວຂ້ອງກັບ ຕາເວັນ ຫລື ພຣະອາທິດ ແລະ ຈັນໂທສຸຣິຍະຄະຕິຫມາຍເຖິງຣະບົບຈັນທະຄະຕິທີ່ກຳນົດຕາມຮອຍຕາເວັນ ຫລື ຕາມພຣະອາທິດ ຄື ການໄລ່ທີ່ມີພຽງ ໒໙ ແລະ ໓໐ ມື້ຕໍ່ເດືອນພ້ອມທັງແປດສອງຫົນ (ເດືອນແປດສອງເທື່ອ) ເພື່ອເຮັດໃຫ້ປະຕິທິນຈັນທະຄະຕິເຂົ້າກັບປະຕິທິນສຸຣິຍະຄະຕິທີ່ມີ ໓໐ ແລະ ໓໑ ມື້ຕໍ່ເດືອນນັ້ນເອງ ຖ້າເພິ່ນປ່ຽນວິທີການກຳນົດ ເຮົາຕ້ອງຮູ້ຈັກປີທີ່ເພິ່ນເລີ້ມຕົ້ນການປ່ຽນແປງ

- ເຮົາບໍ່ຮູ້ດ້ວຍຄວາມແນ່ນອນວ່າ ເພິ່ນເຄີຍໄດ້ກຳນົດເອົາ ມື້ແຮມ ເປັນມື້ເລີ້ມຕົ້ນ ປີຈັນທະຄະຕິ ແລະ ມື້ເລີ້ມຕົ້ນຂອງປີຈັນໂທສຸຣິຍະຄະຕິມາກ່ອນແລ້ວຫລືບໍ່ ໃນປາງໃດປາງນຶ່ງ

- ປີຂານ ເປັນປີຈັນໂທສຸຣິຍະຄະຕິ ຫລື ປີສຸຣິຍະຄະຕິ ອັນມີຣາສີເສືອ ເປັນເຄື່ອງຫມາຍປະຈຳປີຜົວ່າ ປີຕ່າງໆແຫ່ງມະຫາສັກຣາດບໍ່ຈຳກັດຢູ່ໃນປີຈັນໂທສຸຣິຍະຄະຕິ ຣາສີປະຈຳປີດັ່ງກ່າວ ຈະໃຊ້ການບໍ່ໄດ້ ແລະ ຣາສີດັ່ງກ່າວນີ້ ຄົງບໍ່ເຄີຍມີມາກ່ອນໃນປະຕິທິນມະຫາສັກຣາດ ເພາະວ່າ ເຄື່ອງຫມາຍຣາສີແບບນີ້ ຄົງມາຈາກຄວາມສີວິໄລບູຮານຂອງຊາວອິນເດັຽຫລາຍກວ່າ

- ຂພຈ ບໍ່ຄ່ອຍມີໂອກາດຄົ້ນຫາຂໍ້ມູນເຫລົ່ານີ້ຈຶ່ງຂໍໃຫ້ນັກຮຽນຮູ້ ເປັນຜູ້ສຶກສາ ແລະ ດຳເນີນການຄົ້ນຄວ້າຕໍ່ໄປ ອີກປະການນຶ່ງ ຂພຈ ຂໍສເນີທ່ານທີ່ຈະດຳເນີນການບັນທຶກ ໃຫ້ທ່ານເສີມແຖວຕັ້ງຕື່ມຈັກສາມສີ່ແຖວ ສຳລັບ ມື້ຂຶ້ນມື້ແຮມຕາມການກຳນົດຂອງສຍາມ ມື້ຂຶ້ນມື້ແຮມຕາມປະເພນີ ລ້ານຊ້າງ ມື້ຂຶ້ນມື້ແຮມຕາມການກຳນົດຂອງພະມ້າ ແລະ ມື້ຂຶ້ນມື້ແຮມຕາມການກຳນົດຂອງຝຣັ່ງ ຕາມຄວາມສາມາດ ເພື່ອໃຫ້ເຮົາເຫັນຄວາມແຕກຕ່າງແລະການປ່ຽນແປງພາຍໃນປະຕິທິນລາວທັງຫລາຍນັ້ນເອງ

## ຕົວຢ່າງການໃຊ້ປະຕິທິນມະຫາສັກຣາດ

- ເດືອນຈັນທະຄະຕິ ອັນມີມື້ຂຶ້ນເປັນຕົ້ນ ແລະ ມື້ແຮມເປັນປາຍ ປັດຈຸບັນການ ເພີ່ມກຳໜົດໃຫ້ມີມື້ຂຶ້ນ ໑໕ ມື້ສເມີ ສ່ວນມື້ແຮມນັ້ນຈະມີ ໑໔ ແລະ ໑໕ ມື້ເປັນບາງເດືອນ ຊຶ່ງເດືອນແຕ່ລະເດືອນຈະມີ ໒໙ ແລະ ໓໐ ມື້ດັ່ງນີ້ຕລອດໄປ ສະນັ້ນ ເດືອນໃດຢຸດຢູ່ແຮມ ໑໔ ຄ່ຳ ແປວ່າ ເດືອນນັ້ນ ມີ ໒໙ ມື້ ແລະ ເດືອນໃດມີແຮມ ໑໕ ຄ່ຳ ເດືອນນັ້ນກໍມີ ໓໐ ມື້ນັ້ນເອງ ແຕ່ຖ້າເຮົາຢາກຂຽນເປັນວັນທີໄປເລີຍ ແທນທີ່ຈະຂຽນເປັນມື້ຂຶ້ນມື້ແຮມ ໃຫ້ທ່ານຂຽນແບບນີ້ ຄື

- ໑ ໒ ໓ ໔ ໕ ໖ ໗ ໘ ໙ ໑໐ ໑໑ ໑໒ ໑໓ ໑໔ ໑໕ ໑໖ ... ໒໙ (໑໖ = ແຮມ ຄ່ຳ ໑)
- ໑ ໒ ໓ ໔ ໕ ໖ ໗ ໘ ໙ ໑໐ ໑໑ ໑໒ ໑໓ ໑໔ ໑໕ ໑໖ ... ໓໐

ການຂຽນທີ່ເຮັດໃຫ້ມີມື້ຂຶ້ນມື້ແຮມປະກົດຢູ່ໃນປະຕິທິນ ຈະພາໃຫ້ເຮົາຮູ້ຈັກກັບການຫມູນວຽນຂອງພຣະຈັນໂດຍກົງ ແຕ່ເຮົາກໍສາມາດຂຽນເປັນວັນທີ (ວັນທີ ໒໙ ຫລື ໓໐) ແລະພ້ອມດຽວກັນນັ້ນໃຫ້ຫມາຍມື້ຂຶ້ນມື້ແຮມພ້ອມໆກັນໄປກັບວັນທີ ວາງປະໄວ້ໃນຕາດຽວກັນ

Janvier 2004 - ມະກະຣາ ຫລື ມັງກອນ ພສ.໒໕໔໗ ປີກາບສັນ

| ອາທິດ ໑ | ຈັນ ໒ | ອັງຄານ ໓ | ພຸດ ໔ | ພະຫັດ ໕ | ສຸກ ໖ | ເສົາ ໗ |
|---|---|---|---|---|---|---|
| | | | | 1 (10)<br>ຂຶ້ນ ໑໐ ຄ່ຳ<br>16 ມື້ກັດເຫມົ້າ | 2 (11)<br>ຂຶ້ນ ໑໑ ຄ່ຳ<br>17 ມື້ກົດສີ | 3 (12)<br>ຂຶ້ນ ໑໒ ຄ່ຳ<br>18 ມື້ຮ້ວງໄສ້ |
| 4 (13)<br>ຂຶ້ນ ໑໓ ຄ່ຳ<br>19 ເຕົ່າຊະງ້າ | 5 (14)<br>ຂຶ້ນ ໑໔ ຄ່ຳ<br>20 ກ່າມົດ | 6 (15)<br>ຂຶ້ນ ໑໕ ຄ່ຳ<br>21 ກາບສັນ | 7 (16)<br>ແຮມຄ່ຳ ໑<br>22 ຮັບເຮົ້າ | 8 (17)<br>ແຮມ ໒ ຄ່ຳ<br>23 ຮວາຍເສັດ | 9 (18)<br>ແຮມ ໓ ຄ່ຳ<br>24 ເມີງໄຄ້ | 10 (19)<br>ແຮມ ໔ ຄ່ຳ<br>25 ເປີກໃຈ້ |
| 11 (20)<br>ແຮມ ໕ ຄ່ຳ<br>26 ກັດເປົ້າ | 12 (21)<br>ແຮມ ໖ ຄ່ຳ<br>27 ກົດຍີ | 13 (22)<br>ແຮມ ໗ ຄ່ຳ<br>28 ຮ້ວງເຫມົ້າ | 14 (23)<br>ແຮມ ໘ ຄ່ຳ<br>29 ເຕົ່າສີ | 15 (24)<br>ແຮມ ໙ ຄ່ຳ<br>30 ກ່າໄສ້ | 16 (25)<br>ແຮມ ໑໐ ຄ່ຳ<br>31 ກາບຊະງ້າ | 17 (26)<br>ແຮມ ໑໑ ຄ່ຳ<br>32 ຮັບມົດ |
| 18 (27)<br>ແຮມ ໑໒ ຄ່ຳ<br>33 ຮວາຍສັນ | 19 (28)<br>ແຮມ ໑໓ ຄ່ຳ<br>34 ເມີງເຮົ້າ | 20 (29)<br>ແຮມ ໑໔ ຄ່ຳ<br>35 ເປີກເສັດ | 21 (30)<br>ແຮມ ໑໕ ຄ່ຳ<br>36 ກັດໄຄ້ | 22 (1)<br>ຂຶ້ນຄ່ຳ ໑<br>37 ກົດໃຈ້ | 23 (2)<br>ຂຶ້ນ ໒ ຄ່ຳ<br>38 ຮ້ວງເປົ້າ | 24 (3)<br>ຂຶ້ນ ໓ ຄ່ຳ<br>39 ເຕົ່າຍີ |
| 25 (4)<br>ຂຶ້ນ ໔ ຄ່ຳ<br>40 ກ່າເຫມົ້າ | 26 (5)<br>ຂຶ້ນ ໕ ຄ່ຳ<br>41 ກາບສີ | 27 (6)<br>ຂຶ້ນ ໖ ຄ່ຳ<br>42 ຮັບໄສ້ | 28 (7)<br>ຂຶ້ນ ໗ ຄ່ຳ<br>43 ຮວາຍຊະງ້າ | 29 (8)<br>ຂຶ້ນ ໘ ຄ່ຳ<br>44 ເມີງມົດ | 30 (9)<br>ຂຶ້ນ ໙ ຄ່ຳ<br>45 ເປີກສັນ | 31 (10)<br>ຂຶ້ນ ໑໐ ຄ່ຳ<br>46 ກັດເຮົ້າ |

ແຜງ ໑

(*) ເລກປະຈຳມື້ທີ່ຢູ່ແຖວສາມໃນຕາແຕ່ລະຕາ ເພື່ອບອກຄວາມແນ່ນອນ ແລະ ມື້ຖເລີງສົກ ກົງກັບມື້ຂຶ້ນຄ່ຳໜຶ່ງ

# ຕົວຢ່າງການໃຊ້ປະຕິທິນມະຫາສັກຣາດ

ມື້ຖເລີງສົກ ແມ່ນມື້ຂຶ້ນປີໃຫມ່ ມື້ປີໃຫມ່ແຫ່ງມະຫາສັກຣາດແມ່ນມື້ຂຶ້ນຄໍ່າໜຶ່ງ ຈະຕົກຖືກເດືອນໃດ ໃຫ້ທ່ານຊອກເອົາເອງ

ຕົວຢ່າງຂ້າງລຸ່ມນີ້ ຂພຈ ບໍ່ໄດ້ຂຽນມື້ຂຶ້ນມື້ແຮມໃສ່ໄວ້ ເພື່ອໃຫ້ທ່ານຊອກຈົດໃສ່ຕາມໃຈຊອບ

**ປີກົດຍີ ກົງກັບ ປີຂານ ແຫ່ງຣາສີເສືອ** — **2010 - 1/3**

| | | | ມັງກອນ / ມະກະຣາ Janvier |
|---|---|---|---|
| ສ | 1 | 48 | ຮ້ວງໄຄ້ |
| ສ | 2 | 49 | ເຕົ່າໃຈ້ |
| ທ | 3 | 50 | ກ່າເປົ້າ |
| ຈ | 4 | 51 | ກາບຍີ |
| ຄ | 5 | 52 | ຮັບເຫມົ້າ |
| ພ | 6 | 53 | ຮວາຍສີ |
| ພ | 7 | 54 | ເມິງໄສ້ |
| ສ | 8 | 55 | ເປີກຊະງ້າ |
| ສ | 9 | 56 | ກັດມົດ |
| ທ | 10 | 57 | ກົດສັນ |
| ຈ | 11 | 58 | ຮ້ວງເຮົ້າ |
| ຄ | 12 | 59 | ເຕົ່າເສັດ |
| ພ | 13 | 60 | ກ່າໄຄ້ |
| ພ | 14 | 1 | ກາບໃຈ້ |
| ສ | 15 | 2 | ຮັບເປົ້າ |
| ສ | 16 | 3 | ຮວາຍຍີ |
| ທ | 17 | 4 | ເມິງເຫມົ້າ |
| ຈ | 18 | 5 | ເປີກສີ |
| ຄ | 19 | 6 | ກັດໄສ້ |
| ພ | 20 | 7 | ກົດຊະງ້າ |
| ພ | 21 | 8 | ຮ້ວງມົດ |
| ສ | 22 | 9 | ເຕົ່າສັນ |
| ສ | 23 | 10 | ກ່າເຮົ້າ |
| ທ | 24 | 11 | ກາບເສັດ |
| ຈ | 25 | 12 | ຮັບໄຄ້ |
| ຄ | 26 | 13 | ຮວາຍໃຈ້ |
| ພ | 27 | 14 | ເມິງເປົ້າ |
| ພ | 28 | 15 | ເປີກຍີ |
| ສ | 29 | 16 | ກັດເຫມົ້າ |
| ສ | 30 | 17 | ກົດສີ |
| ທ | 31 | 18 | ຮ້ວງໄສ້ |

| | | | ກຸມພາ Février |
|---|---|---|---|
| ຈ | 1 | 19 | ເຕົ່າຊະງ້າ |
| ຄ | 2 | 20 | ກ່າມົດ |
| ພ | 3 | 21 | ກາບສັນ |
| ພ | 4 | 22 | ຮັບເຮົ້າ |
| ສ | 5 | 23 | ຮວາຍເສັດ |
| ສ | 6 | 24 | ເມິງໄຄ້ |
| ທ | 7 | 25 | ເປີກໃຈ້ |
| ຈ | 8 | 26 | ກັດເປົ້າ |
| ຄ | 9 | 27 | ກົດຍີ |
| ພ | 10 | 28 | ຮ້ວງເຫມົ້າ |
| ພ | 11 | 29 | ເຕົ່າສີ |
| ສ | 12 | 30 | ກ່າໄສ້ |
| ສ | 13 | 31 | ກາບຊະງ້າ |
| ທ | 14 | 32 | ຮັບມົດ |
| ຈ | 15 | 33 | ຮວາຍສັນ |
| ຄ | 16 | 34 | ເມິງເຮົ້າ |
| ພ | 17 | 35 | ເປີກເສັດ |
| ພ | 18 | 36 | ກັດໄຄ້ |
| ສ | 19 | 37 | ກົດໃຈ້ |
| ສ | 20 | 38 | ຮ້ວງເປົ້າ |
| ທ | 21 | 39 | ເຕົ່າຍີ |
| ຈ | 22 | 40 | ກ່າເຫມົ້າ |
| ຄ | 23 | 41 | ກາບສີ |
| ພ | 24 | 42 | ຮັບໄສ້ |
| ພ | 25 | 43 | ຮວາຍຊະງ້າ |
| ສ | 26 | 44 | ເມິງມົດ |
| ສ | 27 | 45 | ເປີກສັນ |
| ທ | 28 | 46 | ກັດເຮົ້າ |
| | | | 0 |

| | | | ມີນາ Mars |
|---|---|---|---|
| ຈ | 1 | 47 | ກົດເສັດ |
| ຄ | 2 | 48 | ຮ້ວງໄຄ້ |
| ພ | 3 | 49 | ເຕົ່າໃຈ້ |
| ພ | 4 | 50 | ກ່າເປົ້າ |
| ສ | 5 | 51 | ກາບຍີ |
| ສ | 6 | 52 | ຮັບເຫມົ້າ |
| ທ | 7 | 53 | ຮວາຍສີ |
| ຈ | 8 | 54 | ເມິງໄສ້ |
| ຄ | 9 | 55 | ເປີກຊະງ້າ |
| ພ | 10 | 56 | ກັດມົດ |
| ພ | 11 | 57 | ກົດສັນ |
| ສ | 12 | 58 | ຮ້ວງເຮົ້າ |
| ສ | 13 | 59 | ເຕົ່າເສັດ |
| ທ | 14 | 60 | ກ່າໄຄ້ |
| ຈ | 15 | 1 | ກາບໃຈ້ |
| ຄ | 16 | 2 | ຮັບເປົ້າ |
| ພ | 17 | 3 | ຮວາຍຍີ |
| ພ | 18 | 4 | ເມິງເຫມົ້າ |
| ສ | 19 | 5 | ເປີກສີ |
| ສ | 20 | 6 | ກັດໄສ້ |
| ທ | 21 | 7 | ກົດຊະງ້າ |
| ຈ | 22 | 8 | ຮ້ວງມົດ |
| ຄ | 23 | 9 | ເຕົ່າສັນ |
| ພ | 24 | 10 | ກ່າເຮົ້າ |
| ພ | 25 | 11 | ກາບເສັດ |
| ສ | 26 | 12 | ຮັບໄຄ້ |
| ສ | 27 | 13 | ຮວາຍໃຈ້ |
| ທ | 28 | 14 | ເມິງເປົ້າ |
| ຈ | 29 | 15 | ເປີກຍີ |
| ຄ | 30 | 16 | ກັດເຫມົ້າ |
| ພ | 31 | 17 | ກົດສີ |

| | | | ເມສາ Avril |
|---|---|---|---|
| ພ | 1 | 18 | ຮ້ວງໄສ້ |
| ສ | 2 | 19 | ເຕົ່າຊະງ້າ |
| ສ | 3 | 20 | ກ່າມົດ |
| ທ | 4 | 21 | ກາບສັນ |
| ຈ | 5 | 22 | ຮັບເຮົ້າ |
| ຄ | 6 | 23 | ຮວາຍເສັດ |
| ພ | 7 | 24 | ເມິງໄຄ້ |
| ພ | 8 | 25 | ເປີກໃຈ້ |
| ສ | 9 | 26 | ກັດເປົ້າ |
| ສ | 10 | 27 | ກົດຍີ |
| ທ | 11 | 28 | ຮ້ວງເຫມົ້າ |
| ຈ | 12 | 29 | ເຕົ່າສີ |
| ຄ | 13 | 30 | ກ່າໄສ້ |
| ພ | 14 | 31 | ກາບຊະງ້າ |
| ພ | 15 | 32 | ຮັບມົດ |
| ສ | 16 | 33 | ຮວາຍສັນ |
| ສ | 17 | 34 | ເມິງເຮົ້າ |
| ທ | 18 | 35 | ເປີກເສັດ |
| ຈ | 19 | 36 | ກັດໄຄ້ |
| ຄ | 20 | 37 | ກົດໃຈ້ |
| ພ | 21 | 38 | ຮ້ວງເປົ້າ |
| ພ | 22 | 39 | ເຕົ່າຍີ |
| ສ | 23 | 40 | ກ່າເຫມົ້າ |
| ສ | 24 | 41 | ກາບສີ |
| ທ | 25 | 42 | ຮັບໄສ້ |
| ຈ | 26 | 43 | ຮວາຍຊະງ້າ |
| ຄ | 27 | 44 | ເມິງມົດ |
| ພ | 28 | 45 | ເປີກສັນ |
| ພ | 29 | 46 | ກັດເຮົ້າ |
| ສ | 30 | 47 | ກົດເສັດ |

ແຜງ ໒

(*) ອາທິດໜຶ່ງມີເຈັດມື້ ແລະ ມື້ທີໜຶ່ງກົງກັບວັນອາທິດ ມື້ສອງກົງກັບວັນຈັນ ແລະ ມື້ເຈັດກົງກັບວັນເສົາ

ການດູການເດົາແລະການຄະລໍາຕ່າງໆທີ່ເຮົາຮູ້ກັນດີນັ້ນ ແມ່ນຂຶ້ນຢູ່ກັບຈໍານວນວັນ ໖໐ ວັນນີ້ເອງ ດັ່ງນັ້ນ ໃນສ່ວນຕົວແລ້ວໂດຍປັສຈາກຫລັກວິທຍາການອັນໃດ ຂພຈ ຄິດເຖິງສິ່ງທີ່ເພີ່ມຂຽນກ່ຽວກັບ

# ຕົວຢ່າງການໃຊ້ປະຕິທິນມະຫາສັກຣາດ

ພຣະເຈົ້າຟ້າງຸ່ມ ວ່າດ້ວຍການຖືຜີຂອງຄົນລາວໃນຄາວນັ້ນ ແລະ ສິ່ງທີ່ເພິ່ນກ່າວວ່າ ການຖືຜີ ອາດຈະຕົກຢູ່ໃນກໍຣະນີການຄະລຳຕ່າງໆທີ່ເພິ່ນໄດ້ບັນຍັດໄວ້ໃນມື້ຕ່າງໆແຫ່ງມະຫາສັກຣາດນີ້ເອງ ດັ່ງທ່ານຈະໄດ້ເຫັນ ຕົວຢ່າງບາງອັນ ກ່ຽວກັບມື້ວັນ ຜົວ ມື້ເທົ່ານັ້ນ ອັນປັສຈາກ ມື້ຂຶ້ນມື້ແຮມ ມື້ທັງເຈັດຂອງສັປດາ ເດືອນຕ່າງໆ ເຊັ່ນ ເດືອນຈຽງ ເດືອນຍີ່ ເປັນຕົ້ນ ແລະ ເດືອນສິບສອງເປັນປາຍ ແລະ ປີທັງຫລາຍ ຫລື ປີແຕ່ລະປີ ແຫ່ງມະຫາສັກຣາດ ຊຶ່ງ ຂພຈ ຈະບໍ່ໄດ້ກ່າວເຖິງ

**2010 - 2/3**

| | | | ພຶສພາ Mai | | | | ມິຖຸນາ Juin | | | | ກໍຣະກົດ ກໍຣະກະດາ Juillet | | | | ສິງຫາ Août |
|---|---|---|---|---|---|---|---|---|---|---|---|---|---|---|---|
| ສ | 1 | 48 | ຮ້ວງໃກ້ | ຄ | 1 | 19 | ເຕົ່າຊະງ້າ | ພ | 1 | 49 | ເຕົ່າໃຈ້ | ທ | 1 | 20 | ກ່າມົດ |
| ທ | 2 | 49 | ເຕົ່າໃຈ້ | ພ | 2 | 20 | ກ່າມົດ | ສ | 2 | 50 | ກ່າເປົ້າ | ຈ | 2 | 21 | ກາບສັນ |
| ຈ | 3 | 50 | ກ່າເປົ້າ | ພ | 3 | 21 | ກາບສັນ | ສ | 3 | 51 | ກາບຍີ | ຄ | 3 | 22 | ຮັບເຮົ້າ |
| ຄ | 4 | 51 | ກາບຍີ | ສ | 4 | 22 | ຮັບເຮົ້າ | ທ | 4 | 52 | ຮັບເຫມົ້າ | ພ | 4 | 23 | ຮວາຍເສັດ |
| ພ | 5 | 52 | ຮັບເຫມົ້າ | ສ | 5 | 23 | ຮວາຍເສັດ | ຈ | 5 | 53 | ຮວາຍສີ | ພ | 5 | 24 | ເມີງໃກ້ |
| ພ | 6 | 53 | ຮວາຍສີ | ທ | 6 | 24 | ເມີງໃກ້ | ຄ | 6 | 54 | ເມີງໃສ້ | ສ | 6 | 25 | ເປີກໃຈ້ |
| ສ | 7 | 54 | ເມີງໃສ້ | ຈ | 7 | 25 | ເປີກໃຈ້ | ພ | 7 | 55 | ເປີກຊະງ້າ | ສ | 7 | 26 | ກັດເປົ້າ |
| ສ | 8 | 55 | ເປີກຊະງ້າ | ຄ | 8 | 26 | ກັດເປົ້າ | ພ | 8 | 56 | ກັດມົດ | ທ | 8 | 27 | ກົດຍີ |
| ທ | 9 | 56 | ກັດມົດ | ພ | 9 | 27 | ກົດຍີ | ສ | 9 | 57 | ກົດສັນ | ຈ | 9 | 28 | ຮ້ວງເຫມົ້າ |
| ຈ | 10 | 57 | ກົດສັນ | ພ | 10 | 28 | ຮ້ວງເຫມົ້າ | ສ | 10 | 58 | ຮ້ວງເຮົ້າ | ຄ | 10 | 29 | ເຕົ່າສີ |
| ຄ | 11 | 58 | ຮ້ວງເຮົ້າ | ສ | 11 | 29 | ເຕົ່າສີ | ທ | 11 | 59 | ເຕົ່າເສັດ | ພ | 11 | 30 | ກ່າໃສ້ |
| ພ | 12 | 59 | ເຕົ່າເສັດ | ສ | 12 | 30 | ກ່າໃສ້ | ຈ | 12 | 60 | ກ່າໃກ້ | ພ | 12 | 31 | ກາບຊະງ້າ |
| ພ | 13 | 60 | ກ່າໃກ້ | ທ | 13 | 31 | ກາບຊະງ້າ | ຄ | 13 | 1 | ກາບໃຈ້ | ສ | 13 | 32 | ຮັບມົດ |
| ສ | 14 | 1 | ກາບໃຈ້ | ຈ | 14 | 32 | ຮັບມົດ | ພ | 14 | 2 | ຮັບເປົ້າ | ສ | 14 | 33 | ຮວາຍສັນ |
| ສ | 15 | 2 | ຮັບເປົ້າ | ຄ | 15 | 33 | ຮວາຍສັນ | ພ | 15 | 3 | ຮວາຍຍີ | ທ | 15 | 34 | ເມີງເຮົ້າ |
| ທ | 16 | 3 | ຮວາຍຍີ | ພ | 16 | 34 | ເມີງເຮົ້າ | ສ | 16 | 4 | ເມີງເຫມົ້າ | ຈ | 16 | 35 | ເປີກເສັດ |
| ຈ | 17 | 4 | ເມີງເຫມົ້າ | ພ | 17 | 35 | ເປີກເສັດ | ສ | 17 | 5 | ເປີກສີ | ຄ | 17 | 36 | ກັດໃກ້ |
| ຄ | 18 | 5 | ເປີກສີ | ສ | 18 | 36 | ກັດໃກ້ | ທ | 18 | 6 | ກັດໃສ້ | ພ | 18 | 37 | ກົດໃຈ້ |
| ພ | 19 | 6 | ກັດໃສ້ | ສ | 19 | 37 | ກົດໃຈ້ | ຈ | 19 | 7 | ກົດຊະງ້າ | ພ | 19 | 38 | ຮ້ວງເປົ້າ |
| ພ | 20 | 7 | ກົດຊະງ້າ | ທ | 20 | 38 | ຮ້ວງເປົ້າ | ຄ | 20 | 8 | ຮ້ວງມົດ | ສ | 20 | 39 | ເຕົ່າຍີ |
| ສ | 21 | 8 | ຮ້ວງມົດ | ຈ | 21 | 39 | ເຕົ່າຍີ | ພ | 21 | 9 | ເຕົ່າສັນ | ສ | 21 | 40 | ກ່າເຫມົ້າ |
| ສ | 22 | 9 | ເຕົ່າສັນ | ຄ | 22 | 40 | ກ່າເຫມົ້າ | ພ | 22 | 10 | ກ່າເຮົ້າ | ທ | 22 | 41 | ກາບສີ |
| ທ | 23 | 10 | ກ່າເຮົ້າ | ພ | 23 | 41 | ກາບສີ | ສ | 23 | 11 | ກາບເສັດ | ຈ | 23 | 42 | ຮັບໃສ້ |
| ຈ | 24 | 11 | ກາບເສັດ | ພ | 24 | 42 | ຮັບໃສ້ | ສ | 24 | 12 | ຮັບໃກ້ | ຄ | 24 | 43 | ຮວາຍຊະງ້າ |
| ຄ | 25 | 12 | ຮັບໃກ້ | ສ | 25 | 43 | ຮວາຍຊະງ້າ | ທ | 25 | 13 | ຮວາຍໃຈ້ | ພ | 25 | 44 | ເມີງມົດ |
| ພ | 26 | 13 | ຮວາຍໃຈ້ | ສ | 26 | 44 | ເມີງມົດ | ຈ | 26 | 14 | ເມີງເປົ້າ | ພ | 26 | 45 | ເປີກສັນ |
| ພ | 27 | 14 | ເມີງເປົ້າ | ທ | 27 | 45 | ເປີກສັນ | ຄ | 27 | 15 | ເປີກຍີ | ສ | 27 | 46 | ກັດເຮົ້າ |
| ສ | 28 | 15 | ເປີກຍີ | ຈ | 28 | 46 | ກັດເຮົ້າ | ພ | 28 | 16 | ກັດເຫມົ້າ | ສ | 28 | 47 | ກົດເສັດ |
| ສ | 29 | 16 | ກັດເຫມົ້າ | ຄ | 29 | 47 | ກົດເສັດ | ພ | 29 | 17 | ກົດສີ | ທ | 29 | 48 | ຮ້ວງໃກ້ |
| ທ | 30 | 17 | ກົດສີ | ພ | 30 | 48 | ຮ້ວງໃກ້ | ສ | 30 | 18 | ຮ້ວງໃສ້ | ຈ | 30 | 49 | ເຕົ່າໃຈ້ |
| ຈ | 31 | 18 | ຮ້ວງໃສ້ | | | | | ສ | 31 | 19 | ເຕົ່າຊະງ້າ | ຄ | 31 | 50 | ກ່າເປົ້າ |

**ແຜງ ມີ**

ນອກຈາກການຄະລຳດັ່ງທີ່ໄດ້ກ່າວເຖິງແລ້ວຂ້າງເທິງນີ້ ເມື່ອກ່ອນ ຄສ. ໑໙໗໕ ນີ້ ຄົນລາວບາງແຫ່ງຍັງໄດ້ພາກັນພັກກິຈການຕ່າງໆໃນທຸກໆ ມື້ຮ້ວງ ແລະ ມື້ຮວາຍ ແລະເພິ່ນກໍບໍ່ໄດ້ພັກກິຈການໃນມື້

# ຕົວຢ່າງການໃຊ້ປະຕິທິນມະຫາສັກຣາດ

ວັນເສົາ ແລະ ວັນອາທິດ ເຫມືອນດັ່ງທຸກວັນນີ້ ແປວ່າ ທ້າມື້ໃດພວກເພິ່ນພາກັນຢຸດງານ ແລະ ພວກເພິ່ນກໍໃຊ້ເວລາອັນນີ້ ເພື່ອໄປລົງລາດງວິລາດຄວາຍ (ຕລາດ) ຫລື ການຊື້ຂາຍຕ່າງໆນັ້ນເອງ

ມື້ວັນຕ່າງໆແຫ່ງມະຫາສັກຣາດນີ້ ເພິ່ນຖືທີ່ສຸດຈົນກາຍເປັນການຄະລຳໄປໃນຕົວເລີຍ ພ້ອມດຽວກັນນັ້ນ ມື້ວັນເຫລົ່ານີ້ ຍັງກາຍເປັນການວາງແຜນເຮັດວຽກເຮັດງານເພີ່ມເຕີມ

**2010 - 3/3**

| ມື້ | ວັນທີ | ມະຫາ | ກັນຍາ Septembre | ມື້ | ວັນທີ | ມະຫາ | ຕຸລາ Octobre | ມື້ (ພະຈິກ) | ວັນທີ | ມະຫາ | ພຶສຈິກາ Novembre | ມື້ | ວັນທີ | ມະຫາ | ທັນວາ Décembre |
|---|---|---|---|---|---|---|---|---|---|---|---|---|---|---|---|
| ພ | 1 | 51 | ກາບຍີ | ສ | 1 | 21 | ກາບສັນ | ຈ | 1 | 52 | ຮັບເຫມົ້າ | ພ | 1 | 22 | ຮັບເຮົ້າ |
| ພ | 2 | 52 | ຮັບເຫມົ້າ | ສ | 2 | 22 | ຮັບເຮົ້າ | ຄ | 2 | 53 | ຮວາຍສີ | ພ | 2 | 23 | ຮວາຍເສັດ |
| ສ | 3 | 53 | ຮວາຍສີ | ທ | 3 | 23 | ຮວາຍເສັດ | ພ | 3 | 54 | ເມິງໃສ້ | ສ | 3 | 24 | ເມິງໃກ້ |
| ສ | 4 | 54 | ເມິງໃສ້ | ຈ | 4 | 24 | ເມິງໃກ້ | ພ | 4 | 55 | ເປີກຊະງ້າ | ສ | 4 | 25 | ເປີກໃຈ້ |
| ທ | 5 | 55 | ເປີກຊະງ້າ | ຄ | 5 | 25 | ເປີກໃຈ້ | ສ | 5 | 56 | ກັດມົດ | ທ | 5 | 26 | ກັດເປົ້າ |
| ຈ | 6 | 56 | ກັດມົດ | ພ | 6 | 26 | ກັດເປົ້າ | ສ | 6 | 57 | ກົດສັນ | ຈ | 6 | 27 | ກົດຍີ |
| ຄ | 7 | 57 | ກົດສັນ | ພ | 7 | 27 | ກົດຍີ | ທ | 7 | 58 | ຮ້ວງເຮົ້າ | ຄ | 7 | 28 | ຮ້ວງເຫມົ້າ |
| ພ | 8 | 58 | ຮ້ວງເຮົ້າ | ສ | 8 | 28 | ຮ້ວງເຫມົ້າ | ຈ | 8 | 59 | ເຕົ່າເສັດ | ພ | 8 | 29 | ເຕົ່າສີ |
| ພ | 9 | 59 | ເຕົ່າເສັດ | ສ | 9 | 29 | ເຕົ່າສີ | ຄ | 9 | 60 | ກ່າໃກ້ | ພ | 9 | 30 | ກ່າໃສ້ |
| ສ | 10 | 60 | ກ່າໃກ້ | ທ | 10 | 30 | ກ່າໃສ້ | ພ | 10 | 1 | ກາບໃຈ້ | ສ | 10 | 31 | ກາບຊະງ້າ |
| ສ | 11 | 1 | ກາບໃຈ້ | ຈ | 11 | 31 | ກາບຊະງ້າ | ພ | 11 | 2 | ຮັບເປົ້າ | ສ | 11 | 32 | ຮັບມົດ |
| ທ | 12 | 2 | ຮັບເປົ້າ | ຄ | 12 | 32 | ຮັບມົດ | ສ | 12 | 3 | ຮວາຍຍີ | ທ | 12 | 33 | ຮວາຍສັນ |
| ຈ | 13 | 3 | ຮວາຍຍີ | ພ | 13 | 33 | ຮວາຍສັນ | ສ | 13 | 4 | ເມິງເຫມົ້າ | ຈ | 13 | 34 | ເມິງເຮົ້າ |
| ຄ | 14 | 4 | ເມິງເຫມົ້າ | ພ | 14 | 34 | ເມິງເຮົ້າ | ທ | 14 | 5 | ເປີກສີ | ຄ | 14 | 35 | ເປີກເສັດ |
| ພ | 15 | 5 | ເປີກສີ | ສ | 15 | 35 | ເປີກເສັດ | ຈ | 15 | 6 | ກັດໃສ້ | ພ | 15 | 36 | ກັດໃກ້ |
| ພ | 16 | 6 | ກັດໃສ້ | ສ | 16 | 36 | ກັດໃກ້ | ຄ | 16 | 7 | ກົດຊະງ້າ | ພ | 16 | 37 | ກົດໃຈ້ |
| ສ | 17 | 7 | ກົດຊະງ້າ | ທ | 17 | 37 | ກົດໃຈ້ | ພ | 17 | 8 | ຮ້ວງມົດ | ສ | 17 | 38 | ຮ້ວງເປົ້າ |
| ສ | 18 | 8 | ຮ້ວງມົດ | ຈ | 18 | 38 | ຮ້ວງເປົ້າ | ພ | 18 | 9 | ເຕົ່າສັນ | ສ | 18 | 39 | ເຕົ່າຍີ |
| ທ | 19 | 9 | ເຕົ່າສັນ | ຄ | 19 | 39 | ເຕົ່າຍີ | ສ | 19 | 10 | ກ່າເຮົ້າ | ທ | 19 | 40 | ກ່າເຫມົ້າ |
| ຈ | 20 | 10 | ກ່າເຮົ້າ | ພ | 20 | 40 | ກ່າເຫມົ້າ | ສ | 20 | 11 | ກາບເສັດ | ຈ | 20 | 41 | ກາບສີ |
| ຄ | 21 | 11 | ກາບເສັດ | ພ | 21 | 41 | ກາບສີ | ທ | 21 | 12 | ຮັບໃກ້ | ຄ | 21 | 42 | ຮັບໃສ້ |
| ພ | 22 | 12 | ຮັບໃກ້ | ສ | 22 | 42 | ຮັບໃສ້ | ຈ | 22 | 13 | ຮວາຍໃຈ້ | ພ | 22 | 43 | ຮວາຍຊະງ້າ |
| ພ | 23 | 13 | ຮວາຍໃຈ້ | ສ | 23 | 43 | ຮວາຍຊະງ້າ | ຄ | 23 | 14 | ເມິງເປົ້າ | ພ | 23 | 44 | ເມິງມົດ |
| ສ | 24 | 14 | ເມິງເປົ້າ | ທ | 24 | 44 | ເມິງມົດ | ພ | 24 | 15 | ເປີກຍີ | ສ | 24 | 45 | ເປີກສັນ |
| ສ | 25 | 15 | ເປີກຍີ | ຈ | 25 | 45 | ເປີກສັນ | ພ | 25 | 16 | ກັດເຫມົ້າ | ສ | 25 | 46 | ກັດເຮົ້າ |
| ທ | 26 | 16 | ກັດເຫມົ້າ | ຄ | 26 | 46 | ກັດເຮົ້າ | ສ | 26 | 17 | ກົດສີ | ທ | 26 | 47 | ກົດເສັດ |
| ຈ | 27 | 17 | ກົດສີ | ພ | 27 | 47 | ກົດເສັດ | ສ | 27 | 18 | ຮ້ວງໃສ້ | ຈ | 27 | 48 | ຮ້ວງໃກ້ |
| ຄ | 28 | 18 | ຮ້ວງໃສ້ | ພ | 28 | 48 | ຮ້ວງໃກ້ | ທ | 28 | 19 | ເຕົ່າຊະງ້າ | ຄ | 28 | 49 | ເຕົ່າໃຈ້ |
| ພ | 29 | 19 | ເຕົ່າຊະງ້າ | ສ | 29 | 49 | ເຕົ່າໃຈ້ | ຈ | 29 | 20 | ກ່າມົດ | ພ | 29 | 50 | ກ່າເປົ້າ |
| ພ | 30 | 20 | ກ່າມົດ | ສ | 30 | 50 | ກ່າເປົ້າ | ຄ | 30 | 21 | ກາບສັນ | ພ | 30 | 51 | ກາບຍີ |
| | | | | ທ | 31 | 51 | ກາບຍີ | | | | | ສ | 31 | 52 | ຮັບເຫມົ້າ |

ແຜງ ໔

ນັກຮຽນຮູ້ແລະນັກຄົ້ນຄວ້າທຸກທ່ານ ຄວນຊອກສແວງຫາຄວາມເຂົ້າໃຈໃນດ້ານນີ້ ເພື່ອຫລີກລ້ຽງການສລຸບຄວາມ ແບບຮູ້ເທົ່າບໍ່ເຖິງການ ແບບໄວປາກເສັ່ງສິນໄວຕີນຕົກກົກໄມ້ ຊຶ່ງການຄົ້ນຄວ້າ ແບບ

# ຕົວຢ່າງການໃຊ້ປະຕິທິນມະຫາສັກຣາດ

ເລັກໆນ້ອຍໆແບບນີ້ແລ ຈະພາໃຫ້ຄວາມເຂົ້າໃຈຂອງນັກຮຽນຮູ້ທຸກທ່ານຫນັກແຫນ້ນດີກວ່າການທີ່ທ່ານຈະໂດດໄປຂຽນປື້ມ ໕-໖໐໐ ຫນ້າບາດດຽວ ໂດຍບໍ່ຜ່ານບັ້ນສຳຄັນອັນນີ້ເສັຽກ່ອນ

## ຕົວຢ່າງ ໑

ຕຳຣາຝອຍທິບ




ຮູປຕາ ໑

ຈັກເອົາຜົວເອົາເມັຽ ໃຫ້ເບິ່ງຕາມຝອຍທິບນີ້ເທີ້ນ

ໃຫ້ນັບອາຍຸປີເກີດໃສ່ກັນ ຄັນແມ່ນຖືກສາຍດຽວກັນ ດີຫນັກແລ ຄັນນັບບໍ່ຖືກສາຍດຽວກັນບໍ່ດີແລ[໑]

- ມື້ຍີ ມື້ສີ ມື້ເສັດ ແມ່ນສາຍດຽວກັນ
- ມື້ໃຈ້ ມື້ຊະງ້າ ມືສັນ ແມ່ນສາຍດຽວກັນ
- ມື້ເປົ້າ ມື້ມົດ ມື້ເຮົ້າ ແມ່ນສາຍດຽວກັນ
- ມື້ເຫມົ້າ ມື້ໃສ້ ມື້ໄຄ້ ແມ່ນສາຍດຽວກັນ

## ຕົວຢ່າງ ໒ - ຈາໄຖ່ຂ້ອຍຄົນໃຫມ່

ຈັກເອົາຂ້ອຍຄົນຂຶ້ນເຮືອນໃຫມ່ ໃຫ້ເອົາ ມື້ຊະງ້າ ມື້ເສັດ ມື້ເຫມົ້າ ມື້ສີ ມື້ໃສ້ ທ້າມື້ນີ້ດີຫນັກແລ ມື້ໃຈ້ ມື້ເປົ້າ ມື້ຍີ ມື້ມົດ ມື້ສັນ ມື້ໄຄ້ ຫົກມື້ນີ້ເກຽຈັກເປັນໂທດແກ່ຢ້າວເຮືອນແລ

## ສລຸບ

ນອກຈາກນີ້ ຍັງມີ ການຫຍິບເສື້ອຜ້າ ການຄົ້ນຫູກ ມື້ຕັດເລັບ ແລະ ອື່ນໆອີກ ທີ່ປະກອບເປັນການວາງແຜນ ຈົນກາຍເປັນຮອດ ຂໍ້ບັງຄັບໄປເລີຍ ຍ້ອນການຄະລຳນີ້ເອງ ແຕ່ຂ້າພະເຈົ້າບໍ່ພານຕາເຫັນມື້ທີ່ເພິ່ນຫ້າມນອນນຳກັນ ມີແຕ່ໄດ້ຍິນເພິ່ນກ່າວຢອກກັນວ່າ ຢ່ານອນນຳກັນວັນສິນ ເພາະຖ້າມີລູກອອກມາ ມັນຈະເປັນຄົນຂີ້ຄ້ ຕາມທີ່ຈິງແລ້ວ ຄົນທັງຫລາຍພາກັນໄປນອນຈຳສິນຢູ່ວັດ ໃນມື້ວັນສິນນີ້

## ຕົວຢ່າງການໃຊ້ປະຕິທິນມະຫາສັກຣາດ

ເຖິງຢ່າງໃດກໍດີ ຂ້າພະເຈົ້າໄດ້ໄລ່ປີມະຫາສັກຣາດນັບຕັ້ງແຕ່ ຄສ. ໑໙໒໐ ມາເຖິງປີ ໒໐໒໐ ໂດຍຖືເອົາຄຣິຕສັກຣາດເປັນຫລັກ ແຕ່ໃນປັດຈຸບັນນີ້ຍັງຂາດແນວນຶ່ງ ຄື ບໍ່ທັນໄດ້ໄລ່ມື້ຂຶ້ນມື້ແຮມ ເຂົ້າໃສ່ໃນປະຕິທິນມະຫາສັກຣາດເທື່ອ

ຂ້າພະເຈົ້າ ຂໍອຸທິດ ຜົນງານອັນນ້ອຍໆອັນນີ້ ແດ່ພໍ່ແລະແມ່ ແດ່ເມັຽແລະລູກທຸກຄົນ ພ້ອມດ້ວຍຄຣູບາອາຈານທັງຫມົດທັງປວງ

ຂໍອຸທິດສິ່ງເລັກໆນ້ອຍໆອັນນີ້ແດ່ຫລານທຸກຄົນພ້ອມດ້ວຍຄົນລາວທຸກຖ້ວນຫນ້າ

ຂໍຂອບໃຈມາຍັງທ່ານ  ຮູ້ແລ້ວເຖົ້າເຂົ້າໃຈແລ້ວຕາຍ  ທີ່ໄດ້ຖາມເພື່ອການເຜີຍແຜ່ແດ່ຄົນລາວດ້ວຍກັນ ພ້ອມນີ້ ຂ້າພະເຈົ້າຂໍອ່ວຍພອນໃຫ້ທ່ານແລະຄອບຄົວ ພ້ອມດ້ວຍຍາດຕິພີ່ນ້ອງ ຈົ່ງມີແຕ່ຄວາມສຸກ ຖ້າທ່ານມີສຸກແລ້ວ ກໍຂໍໃຫ້ທ່ານມີຄວາມສຸກຍິ່ງໆຂຶ້ນໄປເທີ້ນ

ເມື່ອວັນທີ ໑໗/໐໗/໒໐໑໐ ເດືອນ ກໍຣະກະດາ ພສ. ໒໕໕໓ ແຫ່ງເມືອງ ປາຣີສ໌ ທີ່ປະເທດ ຝຣັ່ງ

Maha Sakkarath, le calendrier lao de la grande ère.

Par Khamphéo Phouphetlinthong
ໂດຍ ຄຳແພວ ພູເພັຊຣລິນທອງ

(໑) :	ຕຳລາ ຫາລຶກ-ຫາຍາມ ບູຮານລາວ ໂດຍ ດວງຈັນ ວັນນະບຸບຜາ – ວຽງຈັນ – ວັນທີ ໐໓/໐໖/໒໐໐໒